ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ເລກທີ: 10/ສຂລ
ນະຄອນຫລວງວຽງຈັນ, ວັນທີ 17 ກຸມພາ 2015

# ກົດລະບຽບ
## ຂອງສະມາຄົມນັກຂ່າວແຫ່ງ ສປປ ລາວ

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງຂອງກົດລະບຽບ**

ກົດລະບຽບສະບັບນີ້ກຳນົດຫຼັກການພື້ນຖານກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ລະບອບແບບແຜນວິທີເຮັດວຽກຂອງສະມາຄົມ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານຂອງ ສະມາຄົມ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ໃຫ້ມີຄວາມໂປ່ງໃສ, ເປັນລະບົບ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຄົມ, ສະມາຊິກສະມາຄົມ ແລະ ສັງຄົມ.

**ມາດຕາ 2 ຊື່ສະມາຄົມ:** ສະມາຄົມນັກຂ່າວແຫ່ງ ສປປ ລາວ.
ຊື່ຫຍໍ້: ສຂລ.
ຊື່ເປັນພາສາອັງກິດ: Lao Journalists' Association.
ຊື່ຫຍໍ້ເປັນພາສາອັງກິດ: LAJA.

**ມາດຕາ 3 ຕາປະທັບ.**

ສະມາຄົມນັກຂ່າວແຫ່ງ ສປປ ລາວ ແມ່ນອົງການຈັດຕັ້ງສັງຄົມໜຶ່ງທີ່ຂຶ້ນກັບກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ມີຕາປະທັບເປັນຂອງຕົນເອງ ຊຶ່ງໄດ້ຮັບການອະນຸມັດ ແລະ ຮັບຮອງຈາກອົງການຈັດຕັ້ງລັດທີ່ກ່ຽວຂ້ອງ.

**ມາດຕາ 4 ເປົ້າໝາຍ ແລະ ຈຸດປະສົງການເຄື່ອນໄຫວຂອງສະມາຄົມ**

1. **ເປົ້າໝາຍ:** ເພື່ອເຕົ້າໂຮມແລະເປັນຕົວແທນໃຫ້ແກ່ຜູ້ເຄື່ອນໄຫວວຽກງານຖະແຫຼງຂ່າວ-ສື່ມວນຊົນຂອງ ສປປ ລາວ.

2. **ຈຸດປະສົງ:**

1. ເພື່ອສົ່ງເສີມວິຊາຊີບ ດ້ານຖະແຫຼງຂ່າວ-ສື່ມວນຊົນ ໃຫ້ໄດ້ຮັບການພັດທະນາ ແລະ ຕອບສະໜອງກັບໜ້າທີ່ການເມືອງຕາມພັກ-ລັດ ມອບໝາຍ.
2. ເພື່ອເຕົ້າໂຮມຄວາມສາມັກຄີ ເບິ່ງແຍງຊ່ວຍເຫຼືອຊຶ່ງກັນແລະກັນ ໃນຂົງເຂດຜູ້ເຮັດວິຊາຊີບດ້ານຖະແຫຼງຂ່າວ-ສື່ມວນຊົນ.
3. ເພື່ອເພີ່ມທະວີການຮ່ວມມືກັບບັນດາອົງການຈັດຕັ້ງ ພັກ-ລັດ ແລະ ເອກະຊົນ ກໍ່ຄືສະມາຄົມວິຊາຊີບອື່ນໆເພື່ອປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ.
4. ເພື່ອເພີ່ມທະວີການຮ່ວມມືກັບສະມາຄົມວິຊາຊີບດຽວກັນແລະອົງການຈັດຕັ້ງສາກົນໃນພາກພື້ນ ແລະ ໃນໂລກ ເພື່ອປະກອບສ່ວນເຂົ້າໃນການພັດທະນາວຽກງານຖະແຫຼງຂ່າວ-ສື່ມວນຊົນ.

**ມາດຕາ 5 ຂະແໜງການເຄື່ອນໄຫວ**

1. ຂະແໜງຖະແຫຼງຂ່າວ ແລະ ສື່ມວນຊົນ.

**ມາດຕາ 6 ຂອບເຂດການເຄື່ອນໄຫວ**

ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແມ່ນຈັດຕັ້ງການເມືອງ, ສັງຄົມ, ວິຊາຊີບຂອງຜູ້ເຮັດວຽກງານສື່ມວນຊົນ, ຊຶ່ງຖືກສ້າງຕັ້ງ ແລະ ເຄື່ອນໄຫວຕາມກົດໝາຍ, ມີພາລະບົດບາດ ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກຕົນ ແລະ ຜູ້ເຮັດວຽກງານດ້ານສື່ມວນຊົນອື່ນ, ເຂົ້າຮ່ວມໃນການປະຕິບັດແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ ແລະ ນະໂຍບາຍສື່ມວນຊົນ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 7 ສິດ ແລະ ໜ້າທີ່ຂອງສະມາຄົມ**

ສະມາຄົມ ມີສິດ ແລະ ໜ້າທີ່ ເຂົ້າຮ່ວມສ້າງ, ປະຕິບັດ ແລະ ກວດກາການປະຕິບັດແນວ ທາງນະໂຍບາຍ ແລະ ກົດໝາຍກ່ຽວກັບວຽກງານຖະແຫຼງຂ່າວ ແລະ ສື່ມວນຊົນ; ກຳນົດ ແລະ ກວດກາການປະຕິບັດຈັນຍາບັນຂອງນັກຂ່າວ ແລະ ສົມທົບກັບອົງການຄຸ້ມຄອງສື່ມວນຊົນ, ເຜີຍແຜ່ ແລະ ກວດກາການປະຕິບັດກົດໝາຍ ແລະ ລະບຽບການຂອງສື່ມວນຊົນ; ສົມທົບກັບອົງການຈັດຕັ້ງຂອງພັກ, ລັດ, ອົງການຈັດຕັ້ງມະ ຫາຊົນ ແລະ ອົງການສື່ມວນຊົນເພື່ອບຳລຸງສ້າງດ້ານການເມືອງແນວຄິດ, ຄຸນສົມບັດ ແລະ ຄວາມສາມາດທາງດ້ານວິຊາຊີບໃຫ້ແກ່ນັກຂ່າວ ແລະ ບຸກຄະລາກອນສື່ມວນຊົນ; ສ້າງລາຍຮັບດ້ວຍການເກັບຄ່າສະມາຊິກ, ການຈັດກິດຈະກຳ ແລະ ການໃຫ້ບໍລິການກ່ຽວກັບວຽກງານສື່ມວນຊົນ; ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກຕົນໃນການເຄື່ອນໄຫວວຽກງານສື່ມວນຊົນ; ປະຕິບັດການຍ້ອງຍໍດ້ວຍຮູບການຕ່າງໆໃຫ້ແກ່ນັກຂ່າວ, ບຸກຄະລາກອນສື່ມວນຊົນອື່ນທີ່ມີຜົນງານດີ ເດັ່ນຕໍ່ປະເທດຊາດ, ສັງຄົມ ຫຼື ສາກົນ; ພົວພັນຮ່ວມມືກັບສະມາຄົມນັກຂ່າວຕ່າງປະເທດ, ສຳນັກຂ່າວຕ່າງປະເທດ, ອົງການຈັດຕັ້ງທັງສັງຄົມພາຍໃນ ແລະ ຕ່າງປະເທດ ໂດຍສອດຄ່ອງກັບລະບຽບ ແລະ ກົດໝາຍຂອງ ສປປ ລາວ; ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ແລະ ກົດໝາຍ.

## ໝວດທີ II
## ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະມາຄົມ

**ມາດຕາ 8 ໂຄງປະກອບກົງຈັກຂອງສະມາຄົມ**

- 1. ຄະນະຈັດຕັ້ງ
- 2. ກອງເລຂາ ແລະ ຫ້ອງການ;
- 3. ຄະນະກຳມາທິການ ເສດຖະກິດ-ການເງິນ ແລະ ກິດຈະກຳສັງຄົມ;
- 4. ຄະນະກຳມາທິການ ດ້ານກວດກາ;
- 5. ຄະນະກຳມາທິການ ພົວພັນຕ່າງປະເທດ;
- 6. ຄະນະກຳມາທິການ ຝຶກອົບຮົມ;
- 7. ຄະນະກຳມາທິການ ຮັບຜິດຊອບສາຂາ ສະມາຄົມນັກຂ່າວແຫ່ງ ສປປ ລາວ ປະຈຳພາກເໜືອ;
- 8. ຄະນະກຳມາທິການ ຮັບຜິດຊອບສາຂາ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ປະຈຳພາກກາງ;
- 9. ຄະນະກຳມາທິການ ຮັບຜິດຊອບສາຂາ ສະມາຄົມນັກຂ່າວແຫ່ງ ສປປ ລາວ ປະຈຳພາກໃຕ້.

**ມາດຕາ 9 ໂຄງປະກອບບຸກຄະລາກອນຂອງສະມາຄົມ**

- ປະທານ;
- ຮອງປະທານ;

- ທີ່ປຶກສາກົດຕິມະສັກ;
- ຫົວໜ້າກຳມາທິການ;
- ຮອງຫົວໜ້າກຳມາທິການ;
- ຄະນະກຳມາທິການ;
- ຫົວໜ້າຫ້ອງການ;
- ສະມາຊິກທີ່ເປັນອົງການແລະສ່ວນບຸກຄົນ.

**ມາດຕາ 10 ຄະນະບໍລິຫານສະມາຄົມ**

ຄະນະບໍລິຫານງານ ສະມາຄົມນັກຂ່າວ ແຫ່ງ ສປປ ລາວມີຈຳນວນ 25 ຄົນ. ຄະນະບໍລິຫານ ໄດ້ມາຈາກການເລືອກຕັ້ງໃນກອງປະຊຸມໃຫຍ່ຂອງສະມາຄົມ ແລະ ຈຳນວນໜຶ່ງໄດ້ຮັບການຄັດເລືອກແລະແຕ່ງຕັ້ງຈາກຄະນະປະທານ, ຄະນະບໍລິຫານຂອງສະມາຄົມ ມີອາຍຸການສະໄໝລະ 5 ປີ.

❖ ສິດ ແລະ ໜ້າທີ່ຂອງຄະນະບໍລິຫານ

- ຕຳແໜ່ງກຳມະການຄະນະບໍລິຫານ ສະມາຄົມ: ຖ້າຕຳແໜ່ງກຳມະການຄະນະບໍລິຫານສະມາຄົມວ່າງລົງກ່ອນຄົບກຳນົດຕາມວາລະ, ຄະນະບໍລິຫານ ແຕ່ງຕັ້ງສະມາຊິກສາມັນຄົນໃດຄົນໜຶ່ງ ທີ່ເຫັນສົມຄວນເຂົ້າຮັບຕຳແໜ່ງແທນຕຳແໜ່ງທີ່ວ່າງຢູ່ນັ້ນ ແຕ່ອາຍຸການຂອງຜູ້ຮັບຕຳແໜ່ງແທນຢູ່ໃນຕຳແໜ່ງໄດ້ ເທົ່າກັບອາຍຸການຂອງຜູ້ທີ່ຕົນແທນເທົ່ານັ້ນ.
- ກຳມະການຄະນະບໍລິຫານ ສະມາຄົມ ອາດຈະພົ້ນຈາກຕຳແໜ່ງດ້ວຍເຫດຜົນດັ່ງນີ້ :
  1. ເສຍຊີວິດ;
  2. ລາອອກ;
  3. ພົ້ນຈາກການເປັນສະມາຊິກສະມາຄົມ;
  4. ທີ່ປະຊຸມໃຫຍ່ລົງມະຕິໃຫ້ອອກຈາກຕຳແໜ່ງ.
- ຄະນະບໍລິຫານສະມາຄົມ ຈະຕ້ອງປະຊຸມກັນຢ່າງໜ້ອຍເດືອນລະໜຶ່ງຄັ້ງໂດຍຈັດຂຶ້ນໃນລະຫວ່າງວັນທີ 15 ຫາ ວັນທີ 20 ຂອງທຸກໆເດືອນ ທັງນີ້ເພື່ອປຶກສາຫາລື ກ່ຽວກັບການບໍລິຫານວຽກງານຂອງສະມາຄົມ;
- ກອງປະຊຸມຄະນະບໍລິຫານສະມາຄົມ ຈະຕ້ອງມີສະມາຊິກເຂົ້າຮ່ວມປະຊຸມ ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກຄະນະບໍລິຫານທັງໝົດ ຈຶ່ງຈະຖືວ່າຄົບອົງປະກອບ ຂອງກອງປະຊຸມ. ມະຕິຂອງກອງປະຊຸມຄະນະບໍລິຫານ ໃຫ້ຖືເອົາຕາມສຽງສ່ວນຫຼາຍເປັນຫຼັກ ແຕ່ຖ້າຄະແນນສຽງເທົ່າກັນກໍໃຫ້ປະທານກອງປະຊຸມເປັນຜູ້ຕັດສິນ;
- ໃນກອງປະຊຸມຄະນະບໍລິຫານ ຖ້າປະທານ ແລະ ຮອງປະທານສະມາຄົມບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ ກໍໃຫ້ບັນດາສະມາຊິກຄະນະບໍລິຫານທີ່ເຂົ້າຮ່ວມກອງປະຊຸມນັ້ນເລືອກຕັ້ງກັນເອງ ເພື່ອໃຫ້ຄະນະບໍລິຫານຜູ້ໃດຜູ້ໜຶ່ງ ມາເຮັດໜ້າທີ່ເປັນປະທານກອງປະຊຸມຄັ້ງນັ້ນ.

**ມາດຕາ 11 ປະທານ ແລະ ຮອງປະທານ ສະມາຄົມ**

ປະທານ ແລະ ຮອງປະທານ ແມ່ນໄດ້ມາຈາກການເລືອກຕັ້ງໃນກອງປະຊຸມ ຄັ້ງປະຖົມມະລຶກ ຂອງຄະນະບໍລິຫານສະມາຄົມ ແລະ ອີກຈຳນວນໜຶ່ງໄດ້ຮັບການຄັດເລືອກແລະແຕ່ງຕັ້ງຈາກຄະນະປະທານ.

1. **ປະທານສະມາຄົມ** ຮັບຜິດຊອບຊີ້ນຳທຸກການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະມາຄົມ; ເປັນຕົວແທນຂອງສະມາຄົມໃນການຕິດຕໍ່ກັບບຸກຄົນພາຍນອກ ແລະ ເປັນປະທານໃນກອງປະຊຸມຄະນະບໍລິຫານ ແລະ ກອງປະຊຸມໃຫຍ່ຂອງສະມາຄົມ; ມີໜ້າທີ່ ແລະ ຂອບເຂດສິດຕົ້ນຕໍດັ່ງນີ້:
   - ເຊັນເອກະສານທີ່ພົວພັນເຖິງສະມາຄົມ;

- ຮຽກປະຊຸມສາມັນ ແລະ ວິສາມັນ;
- ແຕ່ງຕັ້ງ ບຸກຄະລາກອນ ເຂົ້າໃນໂຄງປະກອບຂອງ ສະມາຄົມ.

2. **ຮອງປະທານສະມາຄົມ** ເປັນຜູ້ຊ່ວຍປະທານສະມາຄົມ ຮັບຜິດຊອບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະມາຄົມ ແລະ ປະຕິບັດຕາມໜ້າທີ່ ທີ່ປະທານສະມາຄົມມອບໝາຍ ແລະ ເຮັດໜ້າທີ່ແທນປະທານສະມາຄົມໃນເວລາປະທານສະມາຄົມບໍ່ຢູ່ ຫຼື ບໍ່ສາມາດຈະປະຕິບັດໜ້າທີ່ໄດ້.

**ມາດຕາ 12 ຄະນະກວດກາ**

ຄະນະກວດກາ ໄດ້ມາຈາກການເລືອກຕັ້ງ ໃນກອງປະຊຸມໃຫຍ່ສະມາຄົມ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ດໍາເນີນການກວດກາເປັນປົກກະຕິ ແລະ ກວດກາໃນກໍລະນີທີ່ມີປະກົດການ ລະເມີດກົດລະບຽບ ຫຼື ແບບແຜນວິທີການເຄື່ອນໄຫວຂອງສະມາຄົມ;
2. ກວດກາການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິຂອງກອງປະຊຸມໃຫຍ່, ມະຕິກອງປະຊຸມຂອງຄະນະບໍລິຫານ, ມະຕິກອງປະຊຸມຂອງຄະນະປະຈໍາສະມາຄົມ;
3. ກວດກາການຄຸ້ມຄອງບໍລິຫານພາຍໃນສະມາຄົມໃນດ້ານຕ່າງໆ, ການໃຊ້ຈ່າຍການເງິນຂອງສະມາຄົມ ເພື່ອຮັບປະກັນຄວາມເປັນລະບົບລະບຽບ ແລະ ໂປ່ງໃສຂອງສະມາຄົມ;
4. ພິຈາລະນາແກ້ໄຂ ຄໍາຮ້ອງຟ້ອງ, ຄໍາຮ້ອງທຸກ, ຄໍາສະເໜີ ຂອງສະມາຊິກສະມາຄົມ ຕາມຂອບເຂດສິດຂອງຕົນ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ສະມາຄົມເຫັນວ່າຈໍາເປັນ.

**ມາດຕາ 13 ກອງເລຂາ ແລະ ຫົວໜ້າຫ້ອງການຂອງສະມາຄົມ**

ເລຂາທິການ ແລະ ຫົວໜ້າຫ້ອງການສະມາຄົມ ແມ່ນໄດ້ຮັບການແຕ່ງຕັ້ງຈາກ ປະທານສະມາຄົມ, ມີສິດ ແລະ ໜ້າທີ່ ເປັນຜູ້ປະຈໍາການ ຂອງຫ້ອງການສະມາຄົມ ມີພາລະບົດບາດ ເປັນເສນາທິການໃຫ້ແກ່ປະທານ ແລະ ຄະນະບໍລິຫານງານສະມາຄົມ, ຄຸ້ມຄອງບໍລິຫານວຽກງານ, ອໍານວຍຄວາມສະດວກ ໃຫ້ແກ່ທຸກການເຄື່ອນໄຫວວຽກງານຂອງສະມາຄົມ.

## ໝວດທີ III
## ສະມາຊິກສະມາຄົມ

**ມາດຕາ 14 ສະມາຊິກຂອງສະມາຄົມ**

ສະມາຊິກຂອງສະມາຄົມ ມີ 2 ປະເພດຄື:

- ສະມາຊິກທີ່ເປັນອົງການ;
- ສະມາຊິກທີ່ເປັນບຸກຄົນ.
- <u>ເງື່ອນໄຂຂອງສະມາຊິກ</u>

1. ເປັນພົນລະເມືອງລາວມີອາຍຸແຕ່ 18 ປີ ຂຶ້ນໄປ;
2. ເຫັນດີເຫັນພ້ອມກັບກົດລະບຽບຂອງສະມາຄົມ;
3. ເຂົ້າຮ່ວມທຸກການເຄື່ອນໄຫວຂອງສະມາຄົມ;
4. ໃຫ້ການສະໜັບສະໜູນ ທາງດ້ານ ວັດຖຸ ແລະ ຈິດໃຈ ແກ່ການເຄື່ອນໄຫວຂອງສະມາຄົມ.

- ຄ່າລົງທະບຽນ ແລະ ຄ່າບໍາລຸງສະມາຄົມ:

1. ສະມາຊິກ ຂອງສະມາຄົມ ທີ່ເປັນອົງການ ວິຊາຊີບ ດ້ານຂ່າວ-ສື່ມວນຊົນ ຕ້ອງໄດ້ລົງທະບຽນ ແລະ ເສຍຄ່າບໍາລຸງ ຈໍານວນ ສາມ ຫາ ຫ້າລ້ານກີບຕໍ່ປີ;

2. ສະມາຊິກ ສະມາຄົມ ນັກຂ່າວ ແຫ່ງ ສປປ ລາວ ຕ້ອງເສຍຄ່າບຳລຸງຈຳນວນໜຶ່ງແສນກີບຕໍ່ປີ.
3. ສຳລັບທີ່ປຶກສາກິດຕິມະສັກ ແມ່ນອີງຕາມເງື່ອນໄຂຕົວຈິງ.

– ການສະໝັກເຂົ້າເປັນສະມາຊິກ ຂອງສະມາຄົມ: ຜູ້ທີ່ມີຈຸດປະສົງຢາກເຂົ້າເປັນສະມາຊິກ ຂອງສະມາຄົມ ຕ້ອງຍື່ນໜັງສືຄຳຮ້ອງຂໍສະໝັກເປັນສະມາຊິກສະມາຄົມ ຕໍ່ປະທານສະມາຄົມ ຕາມລະບຽບການ.

ສະຖານະພາບຂອງສະມາຊິກກິດຕິມະສັກ: ໂດຍທົ່ວໄປ ສະມາຊິກກິດຕິມະສັກ ແມ່ນບຸກຄົນທີ່ຖືກເຊື້ອເຊີນຈາກ ສະມາຄົມ ໃຫ້ມາເປັນສະມາຊິກກິດຕິມະສັກ, ເຊິ່ງສະຖານະພາບເປັນສະມາຊິກກິດຕິມະສັກສະມາຄົມ ແມ່ນໃຫ້ເລີ່ມນັບແຕ່ວັນທີ່ສະມາຄົມ ໄດ້ຮັບການຕອບຮັບຈາກບຸກຄົນດັ່ງກ່າວເປັນຕົ້ນໄປ.

– ສະຖານະພາບຂອງສະມາຊິກ: ສະຖານະພາບຂອງສະມາຊິກຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:
1. ເສຍຊີວິດ;
2. ລາອອກ;
3. ປະພຶດຕົນບໍ່ເໝາະສົມ.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງສະມາຊິກສະມາຄົມ**

ສະມາຊິກສະມາຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ມີສິດເທົ່າທຽມກັນໃນການນຳໃຊ້ສະຖານທີ່ຂອງສະມາຄົມ;
2. ມີສິດສະເໜີຄວາມຄິດຄວາມເຫັນ ຕໍ່ຄະນະບໍລິຫານສະມາຄົມກ່ຽວກັບການເຄື່ອນໄຫວຂອງສະມາຄົມ;
3. ມີສິດໄດ້ຮັບສະຫວັດດີການຕ່າງໆ ທີ່ມີຢູ່ໃນສະມາຄົມ;
4. ມີສິດເຂົ້າຮ່ວມກອງປະຊຸມຂອງສະມາຄົມ;
5. ມີສິດໃນການເລືອກຕັ້ງ ຫຼື ສະໝັກຮັບເລືອກຕັ້ງ ຫຼື ແຕ່ງຕັ້ງ ເຂົ້າເປັນຄະນະນຳ ຫຼື ກຳມະການຂອງສະມາຄົມ ແລະ ມີສິດອອກສຽງລົງຄະແນນ ຕໍ່ບັນຫາ ແລະ ມະຕິຕ່າງໆ ໃນກອງປະຊຸມໄດ້ 01 ຄະແນນສຽງ;
6. ມີສິດຮ້ອງຂໍຕໍ່ຄະນະກວດກາ ເພື່ອກວດກາເອກະສານ ແລະ ບັນຊີຊັບສິນຂອງສະມາຄົມ;
7. ມີໜ້າທີ່ປະຕິບັດຕາມລະບຽບກົດໝາຍຂອງລັດ, ກົດລະບຽບ ແລະ ຂໍ້ບັງຄັບຕ່າງໆ ຂອງສະມາຄົມຢ່າງເຄັ່ງຄັດ;
8. ມີໜ້າທີ່ປະພຶດຕົນ ໃຫ້ສົມກັບກຽດທີ່ເປັນສະມາຊິກຂອງສະມາຄົມ;
9. ມີໜ້າທີ່ໃຫ້ຄວາມຮ່ວມມື ແລະ ສະໜັບສະໜູນການເຄື່ອນໄຫວວຽກງານຕ່າງໆ ຂອງສະມາຄົມ;
10. ມີໜ້າທີ່ຮ່ວມກິດຈະກຳທີ່ສະມາຄົມຈັດຂຶ້ນ;
11. ມີໜ້າທີ່ປະກອບສ່ວນເຜີຍແຜ່ຊື່ສຽງ ແລະ ກຽດສັກສີ ຂອງສະມາຄົມ ໃຫ້ເປັນທີ່ຮູ້ຈັກຢ່າງກວ້າງຂວາງໃນສັງຄົມ ແລະ ສິດ, ໜ້າທີ່ອື່ນໆ ບົນພື້ນຖານລະບຽບກົດໝາຍ.
12. ຫ້າມສະມາຊິກນຳໃຊ້ສິດແລະໜ້າທີ່ຂອງຕົນເຂົ້າໃນຈຸດປະສົງອື່ນ ນອກຈາກຮັບສິດ ແລະ ໜ້າທີ່ ເຊິ່ງໄດ້ລະບູໄວ້ໃນກົດລະບຽບຂອງ ຂສລ.

**ມາດຕາ 15 ຜົນປະໂຫຍດ ແລະ ນະໂຍບາຍ**

1. ສະມາຊິກສະມາຄົມລວມທັງອົງການແລະບຸກຄົນແມ່ນໄດ້ຮັບການຊຸກຍູ້, ສົ່ງເສີມ ແລະ ປົກປ້ອງໃນການປະຕິບັດສິດ ແລະ ໜ້າທີ່ຂອງຕົນຕາມລະບຽບ ແລະ ກົດໝາຍ.
2. ສະມາຊິກສະມາຄົມລວມທັງອົງການ ແລະ ບຸກຄົນແມ່ນໄດ້ຮັບນະໂຍບາຍດ້ານສະຫວັດດີການສັງຄົມຕາມເງື່ອນໄຂຕົວຈິງ.

## ໝວດທີ IV
## ກອງປະຊຸມໃຫຍ່

**ມາດຕາ 16 ກອງປະຊຸມໃຫຍ່ ຂອງສະມາຄົມ**

ກອງປະຊຸມໃຫຍ່ຂອງສະມາຄົມ ແມ່ນອົງການນໍາພາສູງສຸດຂອງສະມາຄົມ, ເປີດຂຶ້ນຕາມຮູບແບບ ກອງປະຊຸມໃຫຍ່ຕົວແທນສະມາຊິກ ກໍານົດ 05 ປີຕໍ່ຄັ້ງ.

ກອງປະຊຸມຂອງສະມາຄົມປະກອບມີຄື:

1. ກອງປະຊຸມໃຫຍ່;
2. ກອງປະຊຸມປະຈໍາປີ;
3. ກອງປະຊຸມຄະນະບໍລິຫານ.

ສະມາຄົມກໍານົດເອງໃນກົດລະບຽບຂອງຕົນກ່ຽວກັບລະບຽບການແຈ້ງຂ່າວກອງປະຊຸມໃຫຍ່ສະມາຄົມ ດັ່ງນີ້.

ຫົວໜ້າຫ້ອງການ ເປັນຜູ້ແຈ້ງເປັນລາຍລັກອັກສອນ ໃຫ້ສະມາຊິກສະມາຄົມຊາບລ່ວງໜ້າກ່ອນ ຢ່າງໜ້ອຍ 30 ວັນ ກ່ອນໄຂກອງປະຊຸມໃຫຍ່.

ວາລະກອງປະຊຸມແມ່ນກໍານົດ ດັ່ງນີ້:

1. ຕາງໜ້າຄະນະບໍລິຫານ ລາຍງານບົດລາຍງານການເຄື່ອນໄຫວວຽກງານຂອງສະມາຄົມໃນໄລຍະຜ່ານມາ ແລະ ແຜນການເຄື່ອນໄຫວໃນຕໍ່ໜ້າ;
2. ລາຍງານສະພາບການເງິນ, ແຈ້ງບັນຊີລາຍຮັບ-ລາຍຈ່າຍ ແລະ ບັນຊີງົບປະມານຂອງປີທີ່ຜ່ານມາໃຫ້ສະມາຊິກຮັບຮູ້;
3. ຜ່ານຮ່າງກົດລະບຽບສະບັບປັບປຸງ;
4. ເລືອກຕັ້ງຄະນະບໍລິຫານ, ຄະນະກວດກາ ແລະ ຕໍາແໜ່ງສໍາຄັນອື່ນໆ;

ກອງປະຊຸມໃຫຍ່ ຫຼື ກອງປະຊຸມໃຫຍ່ວິສາມັນ ຕ້ອງມີຕົວແທນອົງການສີ່ທີ່ເປັນສະມາຊິກເຂົ້າຮ່ວມປະຊຸມຫຼາຍກວ່າເຄິ່ງໜຶ່ງ ຈຶ່ງຈະຖືວ່າຄົບອົງປະກອບຂອງກອງປະຊຸມ.

## ໝວດທີ V
## ການເງິນ ແລະ ຊັບສິນ

**ມາດຕາ 17 ການເງິນ ແລະ ຊັບສິນຂອງສະມາຄົມ**

- ການເງິນ ແລະ ຊັບສິນທັງໝົດ ແມ່ນກໍາມະສິດຂອງສະມາຄົມ, ເຊິ່ງຢູ່ໃນຄວາມຮັບຜິດຊອບຄຸ້ມຄອງຂອງຄະນະບໍລິຫານສະມາຄົມ. ເງິນສົດຂອງສະມາຄົມ ແມ່ນໃຫ້ນໍາໄປຝາກໄວ້ຢູ່ໃນທະນາຄານ ທະນາຄານການຄ້າຕ່າງປະເທດລາວ ແລະ ທະນາຄານ ພັດທະນາລາວ;
- ການເຊັນຊື່ໃສ່ໃບບິນເງິນ ຫຼື ເຊັກເງິນເຂົ້າ-ອອກບັນຊີເງິນ ຂອງສະມາຄົມ ມີສອງລາຍເຊັນ;
- ປະທານສະມາຄົມ ມີສິດສັ່ງຈ່າຍເງິນຂອງສະມາຄົມຄັ້ງລະບໍ່ເກີນ ສອງລ້ານກີບ. ຖ້າເກີນກວ່ານັ້ນ, ຈະຕ້ອງໄດ້ຮັບອະນຸຍາດຈາກຄະນະບໍລິຫານງານສະມາຄົມ;
- ຄະນະບໍລິຫານງານສະມາຄົມ ອະນຸມັດໃຫ້ຈ່າຍເງິນໄດ້ຄັ້ງລະບໍ່ເກີນ ໜຶ່ງລ້ານກີບ. ຖ້າຈໍາເປັນຈະຕ້ອງໄດ້ຈ່າຍເກີນກວ່ານີ້ ຕ້ອງໄດ້ຮັບອະນຸຍາດຈາກ ປະທານສະມາຄົມ;
- ນາຍບັນຊີມີສິດຮັກສາເງິນສົດໄດ້ບໍ່ເກີນ ຫ້າລ້ານກີບກີບ, ຖ້າເກີນກວ່າຈໍານວນນີ້ ຈະຕ້ອງນໍາໄປຝາກທະນາຄານ ໃນບັນຊີຂອງສະມາຄົມພາຍໃນ 7 ວັນ;
- ນາຍບັນຊີ ຈະຕ້ອງເຮັດບັນຊີລາຍຮັບ-ລາຍຈ່າຍ ແລະ ບັນຊີງົບປະມານ ໃຫ້ຖືກຕ້ອງຕາມຫຼັກການວິຊາການ;

- ຜູ້ກວດສອບບັນຊີ ຕິດຕາມການເຄື່ອນໄຫວ ດ້ານການເງິນຢ່າງເປັນປົກກະຕິ;
- ຜູ້ກວດສອບບັນຊີ ມີສິດ ແລະ ໜ້າທີ່ ກວດສອບບັນຊີຕາມຄວາມຮັບຜິດຊອບຂອງຕົນ;
- ຄະນະບໍລິຫານ ຈະຕ້ອງໃຫ້ຄວາມຮ່ວມມືກັບຜູ້ກວດສອບບັນຊີ ເມື່ອໄດ້ຮັບການຮ້ອງຂໍ.

## ໝວດທີ VI
## ການປັບປຸງປ່ຽນແປງກົດລະບຽບ ແລະ ການແກ້ໄຂຊັບສິນພາຍຫຼັງການຍຸບເລີກສະມາຄົມ

**ມາດຕາ 18 ການປັບປຸງປ່ຽນແປງກົດລະບຽບ**

ກົດລະບຽບຂອງສະມາຄົມສາມາດປັບປຸງ, ແກ້ໄຂ ແລະ ປ່ຽນແປງໄດ້ ໂດຍການຕົກລົງເຫັນດີຈາກຜູ້ເຂົ້າຮ່ວມກອງປະຊຸມໃຫຍ່ສະມາຄົມ ຕາມສຽງສ່ວນຫຼາຍ ແລະ ມີຜົນບັງຄັບໃຊ້ຫຼັງຈາກປະທານສະມາຄົມ ໄດ້ຮັບຮອງເອົາຢ່າງເປັນທາງການ.

**ມາດຕາ 19 ການແກ້ໄຂຊັບສິນຂອງສະມາຄົມ ພາຍຫຼັງການຍຸບເລີກ**

ຊັບສິນຂອງສະມາຄົມທີ່ເຫຼືອຢູ່ ພາຍຫຼັງຍຸບເລີກ ແລະ ໄດ້ຊຳລະສະສາງໜີ້ສິນເປັນທີ່ຮຽບຮ້ອຍແລ້ວ ແມ່ນໂອນໃຫ້ສະມາຄົມ, ມູນນິທິອື່ນທີ່ເຄື່ອນໄຫວຄ້າຍຄືກັນ ແຕ່ຖ້າບໍ່ມີສະມາຄົມ, ມູນນິທິທີ່ເຄື່ອນໄຫວຄ້າຍຄືກັນ ແມ່ນມອບໃຫ້ລັດເປັນຜູ້ຈັດສັນ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

**ມາດຕາ 20 ການຈັດຕັ້ງປະຕິບັດ**

ຄະນະບໍລິຫານ (ປະທານ, ຮອງປະທານ ແລະ ກຳມະການ), ຄະນະກວດກາ, ຄະນະກຳມະການຕ່າງໆ, ຫົວໜ້າຫ້ອງການ ແລະ ສະມາຊິກ ຂອງສະມາຄົມນັກຂ່າວແຫ່ງ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດກົດລະບຽບສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດຂອງກົດລະບຽບສະມາຄົມ**

ກົດລະບຽບສະບັບນີ້ ໄດ້ຮັບຮອງເອົາທີ່ກອງປະຊຸມໃຫຍ່ ຂອງສະມາຄົມນັກຂ່າວ ແຫ່ງ ສປປ ລາວ ຄັ້ງທີ 9 ຈັດຂຶ້ນຢູ່ ຫ້ອງປະຊຸມວິທະຍຸແຫ່ງຊາດລາວ ທີ່ນະຄອນຫຼວງວຽງຈັນ, ໃນວັນທີ 17 ກຸມພາ 2015.

ປະທານສະມາຄົມນັກຂ່າວແຫ່ງ ສ ປ ປ ລາວ

ສະຫວັນຄອນ ຣາຊມຸນຕີ